Australian Government

COVID-19 VACCINATION

# ຂໍ້ມູນ ກ່ຽວກັບວັກຊີນ AstraZeneca

## ວັກຊີນ AstraZeneca

ມີການເຊື່ອມໂຍງລະຫວ່າງຢາວັກຊີນ AstraZeneca ແລະພາວະຢ່າງໜຶ່ງທີ່ເກີດຂຶ້ນຍາກ, ເຊິ່ງກ່ຽວຂ້ອງກັບພາວະກ້ອນເລືອດອຸດຕັນແລະລະດັບເມັດເລືອດນ້ອຍຕໍ່າ. ພາວະດັ່ງກ່າວເອີ້ນວ່າ ພາວະກ້ອນເລືອດອຸດຕັນທີ່ສົມທົບກັບກຸ່ມອາການເມັດເລືອດນ້ອຍຕໍ່າ [Thrombosis with thrombocytopenia syndrome (TTS)].

ມີການແນະນຳໃຫ້ສັກວັກຊີນຕ້ານ COVID-19 ສຳລັບຜູ້ໃຫຍ່ທຸກຄົນ. ວັກຊີນ Pfizer ແມ່ນຢາວັກຊີນທີ່ຖືວ່າເໝາະສົມກວ່າໃນການຕ້ານ COVID-19 ສຳລັບຜູ້ໃຫຍ່ທີ່ມີອາຍຸຕໍ່າກວ່າ 60 ປີ. ເຖິງຢ່າງໃດກໍ່ຕາມ, ຜູ້ໃຫຍ່ທີ່ອາຍຸຕໍ່າກວ່າ 60 ປີກໍຍັງສາມາດເລືອກທີ່ຈະສັກຢາວັກຊີນ AstraZeneca ໄດ້. ໃຫ້ປຶກສາກັບທ່ານໝໍຂອງທ່ານເພື່ອຊ່ວຍໃນການຕັດສິນໃຈຂອງທ່ານ.

ຢາວັກຊີນ AstraZeneca ຈະສັກໃຫ້ແກ່ປະຊາຊົນທີ່ມີອາຍຸ 60 ປີແລະ ອາຍຸສູງກວ່ານັ້ນ.

## Thrombosis ທີ່ມີ thrombocytopenia (ທີ່ຮູ້ກັນໃນຊື່ TTS) ແມ່ນຫຍັງ?

Thrombosis ຫມາຍຄວາມວ່າ ພາວະກ້ອນເລືອດອຸດຕັນ.

Thrombocytopenia ໝາຍຄວາມວ່າລະດັບເມັດເລືອດນ້ອຍຕໍ່າ.

TTS ແມ່ນຜົນຂ້າງຄຽງຢ່າງໜຶ່ງທີ່ເກີດຂຶ້ນຍາກ ຂອງຢາວັກຊີນ AstraZeneca. ຖ້າເກີດຂຶ້ນ, ມັນອາດຈະຮ້າຍແຮງແລະສາມາດເຮັດໃຫ້ຄົນພິການຫຼືເສຍຊີວິດໄດ້. TTSເຮັດໃຫ້ເກີດພາວະກ້ອນເລືອດອຸດຕັນຊຶ່ງອາດຈະຢູ່ຕາມສ່ວນຕ່າງໆຂອງຮ່າງກາຍ. ນອກຈາກນີ້ ມັນກໍຍັງສາມາດກໍ່ໃຫ້ເກີດລະດັບເມັດເລືອດນ້ອຍຕໍ່າຊຶ່ງອາດຈະເຮັດໃຫ້ເລືອດອອກໄດ້.

## TTS ເກີດຂຶ້ນເມື່ອໃດ?

ບັນດາກໍລະນີຕ່າງໆຂອງTTS ທີ່ຖືກລາຍງານ ໄດ້ເກີດຂຶ້ນໃນລະຫວ່າງ 4 ຫາ 42 ວັນຫຼັງຈາກການສັກຢາວັກຊີນ, ເຊິ່ງຕາມປົກກະຕິແລ້ວຈະແມ່ນເວລາທີ່ສັກຢາໂດສທຳອິດຂອງຢາວັກຊີນ AstraZeneca.

## TTS ເກີດຂຶ້ນເລື້ອຍປານໃດ?

TTS ແມ່ນເກີດຂຶ້ນຍາກ. ໃນປັດຈຸບັນ ມີການຄາດຄະເນວ່າຈະມີພົນກະທົບຕໍ່ປະມານ 1-2 ຄົນຕໍ່ຈຳນວນ 100,000ຄົນ ທີ່ໄດ້ຮັບການສັກຢາວັກຊີນ AstraZeneca COVID-19. ແຕ່ວ່າສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ 60ປີ, ມີການຄາດຄະເນວ່າອັດຕາຈະສູງກວ່າ ເຊິ່ງຕົກຢູ່ປະມານ 2-3 ຄົນ ຈາກຈຳນວນ 100,000 ຄົນ. ການຄາດຄະເນເຫຼົ່ານີ້ຈະໄດ້ຮັບການອັບເດດເມື່ອມີຂໍ້ມູນເພີ່ມເຕີມ.

## ກຸ່ມໃດມີຄວາມສ່ຽງຕໍ່ TTS ຫຼາຍກວ່າຄົນອື່ນ?

TTS ປາກົດຈະພົບເລື້ອຍກວ່າຢູ່ໃນກຸ່ມຜູ້ໃຫຍ່ທີ່ມີອາຍຸຍັງໜຸ່ມ, ເຖິງແມ່ນວ່າຈະມີລາຍງານວ່າ ມີໃນຜູ້ສູງອາຍຸບາງຄົນ. ເຮົາບໍ່ຮູ້ວ່າມີພາວະດ້ານສຸຂະພາບທີ່ເປັນມາກ່ອນຢ່າງໃດແດ່ທີ່ອາດສົ່ງຜົນໃຫ້ເກີດພາວະເລືອດອຸດຕັນ. ນັກວິໄຈກຳລັງຄົ້ນຄວ້າກ່ຽວກັບເລື່ອງນີ້ຢູ່.

## ອາການຂອງ TTS ມີຫຍັງແດ່?

TTS ອາດຈະເຮັດໃຫ້ມີອາການບາງຢ່າງຕໍ່ໄປນີ້:

- ເຈັບຫົວຢ່າງຮຸນແຮງແລະຕໍ່ເນື່ອງທີ່:
    - ປາກົດຂຶ້ນຢ່າງໜ້ອຍ 2 ວັນ*ຫຼັງຈາກ* ສັກຢາວັກຊີນ
    - ບໍ່ດີຂຶ້ນດ້ວຍຢາແກ້ປວດທຳມະດາ
    - ອາດຈະຮ້າຍແຮງກວ່າເກົ່າເມື່ອນອນລົງ
- ປວດຮາກແລະຮາກ
- ສາຍຕາມົວ
- ມີຄວາມຫຍຸ້ງຍາກໃນການເວົ້າ
- ເຫງົານອນ
- ຊັກ
- ຫາຍໃຈຍາກ
- ເຈັບໜ້າເອິກ
- ບວມຢູ່ບໍລິເວນຂາ
- ເຈັບທ້ອງຢ່າງຕໍ່ເນື່ອງ
- ມີຈຸດເລືອດນ້ອຍໆພາຍໃຕ້ຜິວໜັງທີ່ຢູ່ຫ່າງຈາກບ່ອນສັກຢາ.

ຖ້າທ່ານຫຼືບຸກຄົນອື່ນເກີດອາການຂ້າງຄຽງຮ້າຍແຮງຢ່າງໃດໜຶ່ງທີ່ກ່າວມາ ຫຼັງຈາກທີ່ທ່ານໄດ້ຮັບການສັກຢາວັກຊີນຕ້ານ COVID-19, ທ່ານຄວນໂທຫາ 000 ໃນທັນທີ.

### ປະໂຫຍດຂອງຢາວັກຊີນ AstraZeneca ແມ່ນມີຫຼາຍກວ່າຄວາມສ່ຽງບໍ?

ແມ່ນແລ້ວ. ຜົນປະໂຫຍດຂອງການສັກວັກຊີນແມ່ນຫຼາຍກວ່າຄວາມສ່ຽງ, ໂດຍສະເພາະສຳລັບຜູ້ສູງອາຍຸທີ່ມີຄວາມສ່ຽງສູງທີ່ຈະເຈັບປ່ວຍໜັກຈາກໂຣກ COVID-19.

### ຈະເປັນແນວໃດຖ້າທ່ານອາຍຸຕ່ຳກວ່າ 60ປີ ແລະ ຖືກຈອງເພື່ອຮັບການສັກຢາ AstraZeneca ຄັ້ງທຳອິດ?

ຖ້າທ່ານໄດ້ຖືກຈອງໄປສັກຢາວັກຊີນ AstraZeneca ຄັ້ງທຳອິດຂອງທ່ານແລະທ່ານອາຍຸຕ່ຳກວ່າ 60ປີ, ຈົ່ງລົມກັບທ່ານໝໍຂອງທ່ານ. ພວກເຂົາຈະຊ່ວຍທ່ານຕັດສິນໃຈວ່າຄວນຈະສັກຢາວັກຊີນຫຼືບໍ່.

### ຈະເປັນແນວໃດຖ້າວ່າທ່ານໄດ້ຮັບການສັກຢາ AstraZeneca ຄັ້ງທຳອິດຂອງທ່ານແລ້ວແລະຈະຮອດກຳນົດສັກຢາຄັ້ງທີສອງຂອງທ່ານ?

ເກືອບທຸກໆກໍລະນີທີ່ TTS ຖືກລາຍງານ ແມ່ນເກີດຂື້ນຫລັງຈາກສັກຢາວັກຊີນ AstraZeneca COVID-19 ຄັ້ງທຳອິດ. ຖ້າທ່ານບໍ່ມີຜົນຂ້າງຄຽງຮ້າຍແຮງຫຼັງຈາກການສັກຢາວັກຊີນ AstraZeneca ຄັ້ງທຳອິດ, ທ່ານກໍສາມາດໝັ້ນໃຈໃນການສັກຢາຄັ້ງທີສອງຂອງທ່ານ, ເຖິງແມ່ນວ່າທ່ານອາຍຸຕ່ຳກວ່າ 60 ປີກໍ່ຕາມ.

### ຢາວັກຊີນ AstraZeneca ປອດໄພ ສຳລັບຄົນທີ່ເຄີຍມີພາວະກ້ອນເລືອດອຸດຕັນມາກ່ອນບໍ?

ຖ້າທ່ານເຄີຍມີພາວະກ້ອນເລືອດອຸດຕັນແບບອື່ນໆມາກ່ອນ ຫຼື ມີຄວາມສ່ຽງຕໍ່ການມີພາວະກ້ອນເລືອດອຸດຕັນ, ທ່ານກໍຍັງສາມາດສັກຢາວັກຊີນ AstraZeneca ໄດ້. ບໍ່ມີຫຼັກຖານໃດໆທີ່ສະແດງວ່າການເຄີຍມີພາວະກ້ອນເລືອດອຸດຕັນມາກ່ອນຈະເຮັດໃຫ້ມີຄວາມສ່ຽງສູງຂຶ້ນຕໍ່ການມີພາວະ TTS ຫຼັງຈາກສັກຢາວັກຊີນ AstraZeneca.

### ສຳລັບຂໍ້ມູນເພີ່ມເຕີມ

ຖ້າທ່ານມີຄຳຖາມກ່ຽວກັບຢາວັກຊີນ AstraZeneca, ໃຫ້ເວົ້າລົມກັບທ່ານໝໍຂອງທ່ານ, ໃຫ້ເຂົ້າໄປທີ່ www.health.gov.au/covid19-vaccines-languages, ຫຼື ໂທຫາສາຍດ່ວນ National Coronavirus ຕາມເບີ 1800 020 080. ສຳລັບບໍລິການ ແປເອກະສານແລະນາຍພາສາ ໃຫ້ໂທຫາເບີ 131 450.